**ມິຊຊາອາທິດທີ 30 ກຳມະດາ**

**ວັນທີ 23 ຕຸລາ 2022**



**ພຣະວໍລະສານໂດຍນັກບຸນລູກາ 18, 9-14**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວຄວາມປຽບທຽບອີກເລື່ອງໜຶ່ງສຳລັບບາງຄົນທີ່ຖືຕົວວ່າເປັນຄົນຊອບທຳແລະປະໝາດຜູ້ອື່ນດັ່ງນີ້ວ່າ: ມີຊາຍສອງຄົນເຂົ້າໄປສວດພາວະນາໃນພຣະວິຫານ, ຜູ້ໜຶ່ງເປັນຄົນຟາຣີເຊວແລະອີກຜູ້ໜຶ່ງເປັນຄົນເກັບສ່ວຍ. ຟາຣີເຊວນັ້ນຢືນຕັ້ງຕົວຊື່ພາວະນາໃນໃຈວ່າ: ໂອພຣະເຈົ້າ, ຂ້າພຣະເຈົ້າຂໍຂອບພຣະຄຸນພຣະອົງ ຍ້ອນຂ້າພະເຈົ້າບໍ່ເປັນຄືຄົນອື່ນໆທີ່ມີແຕ່ລັກໂລບ, ບໍ່ຍຸດຕິທຳ, ຜິດປະເວນີ ແລະບໍ່ເປັນຄືຄົນເກັບສ່ວຍຜູ້ນີ້. ຂ້າພະເຈົ້າອົດອາຫານອາທິດລະສອງເທື່ອ, ເຄື່ອງຂອງທຸກສິ່ງທີ່ຂ້າພະເຈົ້າມີ ຂ້າພະເຈົ້າກໍຖະຫວາຍໜຶ່ງສ່ວນສິບ.

ສ່ວນຄົນເກັບສ່ວຍນັ້ນຢູ່ແຕ່ໄກໆບໍ່ກ້າເງີຍໜ້າຂຶ້ນຟ້າແຕ່ຕີເອິກຕົວເອງທັງເວົ້າວ່າ: ໂອພຣະເຈົ້າໂຜດເມດຕາຂ້າພະເຈົ້າຜູ້ເປັນຄົນບາບນີ້ເທີ້ນ.

ເຮົາບອກພວກເຈົ້າວ່າ: ຜູ້ນີ້ແລ້ວຫລັບເມືອເຮືອນໂດຍໄດ້ເຂົ້າດີກັບພຣະເປັນເຈົ້າ. ສ່ວນຟາຣີເຊວຜູ້ນັ້ນບໍ່ເລີຍ. ຍ້ອນວ່າຜູ້ໃດຍົກຕົວຂຶ້ນຈະຖືກຜາບໃຫ້ຕ່ຳລົງ ແລະຜູ້ໃດຖ່ອມຕົວລົງຈະຖືກຍົກໃຫ້ສູງຂຶ້ນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ອາທິດທີ່ຜ່ານມາ, ພຣະເຢຊູເຈົ້າໄດ້ໃຊ້ເລື່ອງປຽບທຽບເລົ່າໃຫ້ພວກສາວົກຟັງກ່ຽວກັບຄວາມຈຳເປັນແລະຄວາມພາກພຽນໃນຄຳພາວະນາ, ດັ່ງຍິງໝ້າຍທີ່ວອນຂໍຕຸລາການຜູ້ໃຈແຂງຄື້ໃຫ້ຄວາມເປັນທຳແກ່ນາງ. ໃນທີ່ສຸດ, ເຖິງວ່າຕຸລາການຄົນນີ້ຈະຄື້ດຶງປານໃດກໍຕາມ ເຂົາກໍໄດ້ຊ່ວຍເຫລືອຕາມທີ່ນາງໝ້າຍນີ້ວອນຂໍ.

ສ່ວນວັນອາທິດນີ້, ພຣະເຢຊູເຈົ້າກໍສືບຕໍ່ໃຊ້ຄວາມປຽບທຽບເພື່ອກ່າວເຖິງການພາວະນາ. ເທື່ອນີ້ບໍ່ແມ່ນນາງໝ້າຍ, ແຕ່ແມ່ນຊາຍໜຸ່ມສອງຄົນຄື: ຟາຣີເຊວແລະຄົນເກັບສ່ວຍ. ທັງສອງຄົນນີ້ມີທັດສະນະທ່າທີໃນການພາວະນາທີ່ແຕກຕ່າງກັນ. ຄົນຟາຣີເຊວເງີຍໜ້າຂຶ້ນດ້ວຍຄວາມໝັ້ນໃຈ. ເພາະເຂົາຖືວ່າຕົນເປັນຄົນບໍ່ມີບາບມີຜິດ. ແລະການກະທຳຂອງເຂົາກໍຖືກຕ້ອງແລະຊອບທຳໝົດ. ສ່ວນຄົນເກັບສ່ວຍບໍ່ກ້າເງີຍໜ້າຂຶ້ນ. ເພາະເຂົາສຳນຶກວ່າຕົນເປັນຄົນບາບ. ສິ່ງທີ່ເຂົາວອນຂໍຈາກພຣະເຈົ້າຄືຄວາມຮັກແລະການໃຫ້ອະໄພຈາກພຣະອົງ. ດ້ວຍເຫດນີ້, ພຣະເຢຊູເຈົ້າຈຶ່ງກ່າວວ່າ ແມ່ນຄົນເກັບສ່ວຍນີ້ແລ້ວທີ່ໄດ້ຄືນດີກັບພຣະເຈົ້າ. ສ່ວນຟາຣີເຊວຄົນນັ້ນບໍ່ເລີຍ. ເພາະເຂົາບໍ່ສຳນຶກວ່າຕົນເປັນຄົນບາບແລະກໍບໍ່ຕ້ອງການຄວາມເມດຕາຈາກພຣະອົງ.

ຜ່ານທາງແບບຢ່າງຂອງຄົນທັງສອງທີ່ກ່າວມາຂ້າງເທິງນີ້, ວາຈາພຣະເຈົ້າບໍ່ພຽງແຕ່ສອນພວກເຮົາທັດສະນະທ່າທີທີ່ຖືກຕ້ອງໃນເວລາພາວະນາເທົ່ານັ້ນ, ແຕ່ຍັງສອນພວກເຮົາໃຫ້ຮູ້ວ່າສິ່ງທີ່ສຳຄັນຊຶ່ງພວກເຮົາຄວນວອນຂໍໃນຄຳພາວະນານັ້ນກໍຄື ຄວາມເມດຕາກະລຸນາຈາກພຣະເຈົ້າ. ເພາະພວກເຮົາທຸກຄົນລ້ວນແຕ່ເປັນຄົນອ່ອນແອແລະຄົນບາບ. ຖ້າພວກເຮົາບໍ່ອາໄສຄວາມເມດຕາແລະການໃຫ້ອະໄພຈາກພຣະເຈົ້າແລ້ວ, ພວກເຮົາກໍບໍ່ສາມາດລຸກຂຶ້ນຈາກບາບແລະສືບຕໍ່ກ້າວເດີນໄປບົນເສັ້ນທາງແຫ່ງຊີວິດຄວາມເຊື່ອຂອງພວກເຮົາໄດ້. ແລະຍິ່ງໄປກວ່ານັ້ນ, ເມື່ອພວກເຮົາຈາກໂລກນີ້ໄປແລ້ວ, ຖ້າພວກເຮົາບໍ່ໄດ້ຮັບການໃຫ້ອະໄພຈາກພຣະອົງ, ພວກເຮົາກໍບໍ່ສາມາດເຂົ້າອານາຈັກສະຫວັນຢູ່ຮ່ວມກັບພຣະອົງໄດ້. ດ້ວຍເຫດນີ້, ຄວາມເມດຕາແລະການໃຫ້ອະໄພຈາກພຣະເຈົ້າຈຶ່ງເປັນສິ່ງສຳຄັນທີ່ສຸດໃນຊີວິດຂອງພວກເຮົາ. ຄວາມຮັກເມດຕາແລະການໃຫ້ອະໄພຈາກພຣະເຈົ້ານີ້ສະແດງອອກຢ່າງຊັດແຈ້ງຜ່ານທາງສິນອະໄພບາບ, ສິນແຫ່ງການຄືນດີກັບພຣະເຈົ້າ. ແຕ່ເພື່ອຈະໄດ້ຮັບການໃຫ້ອະໄພແລະຄືນດີກັບພຣະເຈົ້າຜ່ານທາງສິນອະໄພບາບນີ້, ສິ່ງສຳຄັນທີ່ສຸດຄືພວກເຮົາຕ້ອງສຳນຶກໄດ້ວ່າຕົນເປັນຄົນບາບແລະຕ້ອງການຄືນດີກັບພຣະເຈົ້າຢ່າງຈິງໃຈ. ເວລານັ້ນ, ພວກເຮົາຈຶ່ງຈະໄດ້ຮັບການຄືນດີກັບພຣະເຈົ້າຢ່າງແທ້ຈິງ. ດັ່ງຄົນເກັບສ່ວຍໃນພຣະວໍລະສານວັນນີ້.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ຈັກວອນຂໍຄວາມເມດຕາແລະການໃຫ້ອະໄພຈາກພຣະອົງໃນຄຳພາວະນາຂອງລູກ. ແລະໂຜດຊ່ວຍລູກໃຫ້ສຳນຶກໄດ້ວ່າ ຕົນເປັນພຽງແຕ່ຄົນບາບແລະຕ້ອງການຄວາມຮັກແລະການຄືນດີກັບພຣະອົງຢູ່ສະເໝີ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ